ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ເລກທີ: 131 -\ພກພ

ນະຄອນຫຼວງວຽງຈັນ, ວັນທີ: 07 FEB 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2020 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລົງວັນທີ 15 ມັງກອນ 2020.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ທີ່ຈະໄດ້ຈັດຂຶ້ນໃນວັນທີ **28 ກຸມພາ 2020** ເວລາ **14:30** ໂມງ (ເລີ່ມລົງທະບຽນເວລາ **13:00** ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ກຳນົດເອົາວັນທີ 30 ມັງກອນ **2020** ເປັນມື້ປິດປຶ້ມບັນຊີຜູ້ຖືຄອງຮຸ້ນ (Record Date) ເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018.

ໃນກໍລະນີທີ່ທ່ານຜູ້ຖືຮຸ້ນບໍ່ສາມາດເຂົ້າຮ່ວມ ສາມາດມອບສິດໃຫ້ບຸກຄົນອື່ນເຂົ້າຮ່ວມປະຊຸມ ແລະ ອອກຄະແນນສຽງແທນ, ກະລຸນາຕື່ມຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມເອກະສານຄັດຕິດເຂົ້າຮ່ວມປະຊຸມ ແລະ ຕ້ອງສົ່ງມອບໃບມອບສິດໃຫ້ເລຂາກອງປະຊຸມກ່ອນເລີ່ມປະຊຸມ.

ໃນກໍລະນີທີ່ທ່ານຜູ້ຖືຮຸ້ນບໍ່ສາມາດເຂົ້າຮ່ວມ ສາມາດມອບສິດໃຫ້ບຸກຄົນອື່ນເຂົ້າຮ່ວມປະຊຸມ ແລະ ອອກຄະແນນສຽງແທນ, ກະລຸນາຕື່ມຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມເອກະສານຄັດຕິດເຂົ້າຮ່ວມປະຊຸມ ແລະ ຕ້ອງສົ່ງມອບໃບມອບສິດໃຫ້ເລຂາກອງປະຊຸມກ່ອນເລີ່ມປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສິທອງ ພິມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2018

ວັນສຸກ ວັນທີ 28 ກຸມພາ 2020
ລົງທະບຽນເວລາ 13:00 ໂມງ
ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394.

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2018 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 (ເອກະສານຄັດຕິດ 2);
3. ບົດລາຍງານ ແລະ ເອກະສານລາຍງານການເງິນ ປະຈຳປີ 2018 (ເອກະສານຄັດຕິດ 3);
4. ປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ (ເອກະສານຄັດຕິດ 4);
5. ແບບຟອມໃບມອບສິດ (ເອກະສານຄັດຕິດ 5);
6. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7).

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 07 ກຸມພາ 2020, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມ **<u>ເອກະສານຄັດຕິດ 5</u>** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕ່າງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລຂາກອງປະຊຸມບໍລິສັດ ທີ່ຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 28 ກຸມພາ 2020.
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ເກດສະໜາ ຈັນທະວົງ ເບີໂທ (+856-21) 265 394 ຫຼື (+856-20) 2240 7393 ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2018 ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ວາລະທີ 01: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ

ຂໍ້ມູນປະກອບ: ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ດັ່ງລຸ່ມນີ້:

- ວາລະທີ 1,3,4,6,7,8 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງກອງປະຊຸມຜູ້ຖືຮຸ້ນແລ້ວ;
- ວາລະທີ 2 ກອງປະຊຸມໄດ້ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ເຊິ່ງໃນການຈັດຕັ້ງປະຕິບັດຕົວຈິງ ພກພ ບໍ່ສາມາດດຳເນີນການຕາມແຜນທີ່ວາງໄວ້ໄດ້ ເນື່ອງຈາກວ່າ ໂຄງການຂອງ ພກພ ທີ່ໄດ້ປະຕິບັດຜ່ານມາແມ່ນຫຍັງບໍ່ທັນໄດ້ຮັບການຊຳລະຈາກເຈົ້າຂອງໂຄງການເປັນໄປຕາມກຳນົດເວລາໃນສັນຍາ ບໍລິສັດຈຶ່ງໄດ້ຊະລໍການລົງທຶນເພື່ອຫລຸດຜ່ອນຄວາມສ່ຽງໃນການລົງທຶນເພີ່ມ ຈຶ່ງເຮັດໃຫ້ບໍລິສັດບໍ່ສາມາດປະຕິບັດໄດ້ຕາມແຜນທີ່ຮອງຮັບຈາກກອງປຊຸມຜູ້ຖືຮຸ້ນປະຈຳປີ 2017.
- ວາລະທີ 5 ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ປະຈຳປີ 2018 ເຊິ່ງກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກເປັນເງິນຈຳນວນ 118,000 ໂດລາສະຫາລັດ ໄລຍະເວລາ 3 ປີ (2018 – 2020) ສະເລ່ຍປີລະປະມານ 39,333 ໂດລາສະຫາລັດ ເປັນການເຊັນສັນຍາ ໃນເບື້ອງຕົ້ນ. ຜ່ານການເຮັດວຽກຕົວຈິງ ພກພ ມີລາຍການເຄື່ອນໄຫວໜ້ອຍລົງກວ່າທີ່ຄາດໄວ້ໃນເບື້ອງຕົ້ນ ພກພ ຈຶ່ງເຮັດສັນຍາເປັນປີຕໍ່ປີ. ໃນປີ 2018 ຄ່າກວດສອບພາຍນອກແມ່ນ 32,390 ໂດລາສະຫາລັດ.

ຄຳເຫັນຂອງສະພາບໍລິຫານ: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

ຂໍ້ມູນປະກອບ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2018 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ **ເອກະສານຄັດຕິດ 2.**

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018

ຂໍ້ມູນປະກອບ:

I. ຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ມີດັ່ງລຸ່ມນີ້:

1. ວຽກງານດ້ານບຸກຄະລາກອນ: ບໍລິສັດໄດ້ເນັ້ນນັກການຝຶກອົບຮົມ ແລະ ຖອດຖອນບົດຮຽນກັບອົງກອນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດ ການສຳຫຼວດເພື່ອກະກຽມການສະໜອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ກວດສຸຂະພາບປະຈຳປີ;
2. ວຽກງານດ້ານການຕະຫຼາດ: ບໍລິສັດກຳລັງກະກຽມເຊັນ MOU ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີ ມູນຄ່າປະມານ 4 ຕື້ກວ່າໂດລາສະຫາລັດ ແລະ ພກພ ເປັນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບ ສຸດທ້າຍ, ນອກນັ້ນ ພກພ ກຳລັງດຳເນີນໂຄງການອະສັງຫາລິມະຊັບໂດຍການກໍ່ສ້າງໂຮງແຮມລະດັບ 4-5 ດາວທີ່ ນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ, ກະກຽມສະເໜີລາຄາສຳລັບໂຄງການໃຫຍ່ໆຂອງ ADB ແລະ WB;
3. ການມອບພັນທະອາກອນ: ພກພ ໄດ້ມອບພັນທະອາກອນໃຫ້ລັດປີ 2018 ລວມມູນຄ່າ 16,524,000 ກີບ.

II. ເອກະສານລາຍງານການເງິນທີ່ຜ່ານການກວດສອບ ປະຈຳປີ 2018 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2018	2017
ຊັບສິນທັງໝົດ (ລ້ານກີບ)	669,615	946,844
ໜີ້ສິນທັງໝົດ (ລ້ານກີບ)	150,755	142,090
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	518,860	804,754
ລາຍຮັບທັງໝົດ (ລ້ານກີບ)	0	45,384
ກຳໄລ/(ຂາດທຶນ) ສຸດທິ (ລ້ານກີບ)	(283,421)	6,725
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	(486.98)	16.56

ລາຍລະອຽດຂອງບົດລາຍງານ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018 ຕາມ**ເອກະສານຄັດຕິດ 3.**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ແລະ ເອກະສານລາຍງານການ ເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງ ໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04. ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີຂາດທຶນຢ່າງຕໍ່ເນື່ອງໃນຊຸມ ປີຜ່ານມາ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019

<u>ຂໍ້ມູນປະກອບ</u>: ພກພ ໄດ້ເຊັນສັນຍາເພື່ອສ້ອມແປງທາງກັບເຈົ້າຂອງໂຄງການເປັນໄລຍະເວລາ 3 ປີ (2019-2021) ຈຳນວນ 4 ໂຄງການ, ໃນປີ 2019 ພກພ ຄາດວ່າຈະສາມາດດຳເນີນການສ້ອມແປງແຕ່ລະເສັ້ນທາງ ແລະ ມີລາຍຮັບລວມທັງໝົດໃນປີປະມານ 289,244 ລ້ານກີບ. ລາຍລະອຽດດັ່ງລຸ່ມນີ້:

ລດ	ຊື່ໂຄງການ	ມູນຄ່າທີ່ຄາດວ່າຈະໄດ້ຮັບ ໃນປີ 2019 (ລ້ານກີບ)	ມູນຄ່າໂຄງການ (2019-2021) (ລ້ານກີບ)
1	ສ້ອມແປງທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	90,985	275,713
2	ສ້ອມແປງທາງ ແຂວງອັດຕາປື	109,160	330,787
3	ສ້ອມແປງທາງແຂວງ ບໍ່ແກ້ວ	38,021	126,638
4	ສ້ອມແປງທາງ ແຂວງ ຫຼວງພະບາງ	51,078	154,782
ລວມ		**289,244**	**887,920**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2019

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35,690 ໂດລາສະຫາລັດ, ພກພ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບພາຍນອກປີ 2015 ຫາ 2018 ເຫັນວ່າການປະຕິບັດວຽກງານ ແລະ ການປະສານງານ ຂອງ PWC ຢູ່ໃນລະດັບດີສົມຄວນ, ມີປະສິບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດ

ສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງແຕ່ລະປີ ມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2016	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	47,000
2017	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	45,000
2018	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	32,390
2019	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35,690

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2019.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງ ໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ: 636 /ໝສທ

ນະຄອນຫຼວງວຽງຈັນ, ວັນທີ: 08 MAY 2018

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ບໍລິສັດ ຜູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ໃນວັນທີ 25 ເມສາ 2018 ເວລາ 14:30 ໂມງ, ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍການເປັນປະທານຂອງ **ທ່ານ ຂັນທະວົງ ດາລາວົງ, ຮອງປະທານສະພາບໍລິຫານ.**

ປະທານກອງປະຊຸມ ໄດ້ລາຍງານວ່າມີຜູ້ເຂົ້າຮ່ວມທັງໝົດ 164 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 24 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 140 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 572.493.400 ຮຸ້ນ, ເທົ່າກັບ 98,37 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ເຊິ່ງຖືວ່າຄົບອົງປະຊຸມ ຕາມກົດໝາຍ ແລະ ລະບຽບຂອງບໍລິສັດ.

ຜູ້ເຂົ້າຮ່ວມກອງປະຊຸມມີຄະນະສະພາບໍລິຫານ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ດັ່ງນີ້:

1.	ທ່ານ ຂັນທະວົງ ດາລາວົງ	ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ;
2.	ທ່ານ ສີທາ ພົມມະຈິດ	ສະມາຊິກສະພາບໍລິຫານ
3.	ທ່ານ ນັນທະລັດ ທິລະກຸນ	ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ.

ທ່ານ ສີທອງ ພົມມະຈິດ ປະທານສະພາບໍລິຫານຕິດພາລະກິດທີ່ຕ່າງປະເທດ ຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ຂັນທະວົງ ດາລາວົງ ເປັນປະທານກອງປະຊຸມແທນ.

ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມ ຢ່າງທົ່ວເຖິງກັບຄັ້ງນີ້ ລວມມີ:

- ທ່ານຕາງໜ້າ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
- ທ່ານຕາງໜ້າ ຈາກຕະຫຼາດຫຼັກຊັບລາວ;
- ບັນດາຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ;
- ບໍລິສັດທີ່ປຶກສາທາງດ້ານການເງິນ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ;
- ຜູ້ຖືຮຸ້ນລາຍຍ່ອຍ ເພື່ອເປັນຕົວແທນໃນການສັງເກດການໃນການປະຊຸມ;

- ຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ;
- ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
- ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ.

ໃນທີ່ກອງປະຊຸມ ໄດ້ມີການອະທິບາຍ ແລະ ແນະນຳກ່ຽວກັບການລົງຄະແນນສຽງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບ ດັ່ງນີ້:

ການລົງຄະແນນສຽງ

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ;

ຖ້າມີ ຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນ ທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;

ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະ ແນນສຽງ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກຈຳ ນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ເມື່ອສິ້ນສຸດການປະຊຸມໃນແຕ່ລະວາລະແລ້ວ ທ່ານປະທານຈະຂໍໃຫ້ທ່ານຜູ້ຖືຮຸ້ນລົງມະຕິຮັບຮອງ ວ່າ ເຫັນດີ ຫຼື ບໍ່ ເຫັນດີ ຫຼັງຈາກນັ້ນເຈົ້າໜ້າທີ່ຈະຄິດໄລ່ຄະແນນ ແລະ ແຈ້ງຜົນຄະແນນໃຫ້ທີ່ປະຊຸມຮັບຊາບໃນແຕ່ລະວາລະທັນທີ ກ່ອນທີ່ຈະເລີ່ມການປະຊຸມໃນວາລະຕໍ່ໄປ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລົບກວນທ່ານກະລຸນາຍົກມືຂຶ້ນ ພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າ ເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານ ການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017. ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າ ຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະ ຂອງກອງປະຊຸມ.

ເພື່ອຮັບປະກັນຄວາມໂປ່ງໃສໃນການນັບຄະແນນສຽງ ຂ້າພະເຈົ້າຂໍລົບກວນອາສາສະໝັກຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດຈາກຜູ້ ຖືຮຸ້ນຢ່າງໜ້ອຍໜຶ່ງທ່ານ ມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ໂດຍລົບກວນທ່ານແຈ້ງຊື່, ນາມ ສະກຸນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຮຸ້ນ ຫຼື ຮັບມອບສິດຈາກຜູ້ຖືຮຸ້ນທ່ານໃດ ແລະ ຂໍຮຽນເຊີນທ່ານໄປທີ່ຈຸດນັບຄະແນນເລີຍ ຂໍ ຮຽນເຊີນ. ມີຜູ້ຖືຮຸ້ນ ທ່ານ ເກດສະໜາ ຈັນທະວົງ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ໄດ້ສະມັກຮ່ວມເປັນສັກຂີພະຍານໃນການ ນັບຄະແນນ.

ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ແລະ ໄດ້ມອບໃຫ້ ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ບໍາສະໜີ ແລະ ລາຍງານວາລະໃນກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

<u>ວາລະທີ 01</u>: ພິຈາລະນາ ແລະ ຮັບຮອງເອົາລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດ ປະຈໍາປີ 2017 ແລະ ເອກະສານລາຍງານສະພາບການເງິນຂອງບໍລິສັດ ປະຈໍາປີ 2017

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດ ປະຈໍາປີ 2017 ແລະ ເອກະສານລາຍງານສະພາບການເງິນຂອງບໍລິສັດ ປະຈໍາປີ 2017 ຕໍ່ກອງປະຊຸມດັ່ງນີ້:

ທຸລະກິດຫຼັກຂອງບໍລິສັດ ຜູ້ສ້າງ ແລະ ພັດທະນາ ນະຄອນ ແມ່ນການກໍ່ສ້າງ, ສ້ອມແປງ, ຍົກລະດັບ ຫຼື ບໍາລຸງຮັກສາ ຖະໜົນ, ຂົວ ແລະ ອື່ນໆ. ລຸກຄ້າເປົ້າໝາຍຂອງບໍລິສັດ ແມ່ນມີແຕ່ລາຍດຽວ ຄື: ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ໃນໄລຍະປີ 2017 ບໍລິສັດໄດ້ສໍາເລັດປະມູນ ແລະ ຜ່ານຂັ້ນຕອນຈັດຕັ້ງປະຕິບັດ ລວມມີທັງໝົດ 05 ໂຄງການ ທີ່ມີມູນຄ່າລວມທັງໝົດໃນສັນຍາ 440.478 ລ້ານກີບ, ໃນນັ້ນ ມີ 03 ໂຄງການຫຼ້າສຸດ ກວມມູນຄ່າ 15.982 ລ້ານກີບ.

ບໍລິສັດ ຜູ້ສ້າງ ແລະ ພັດທະນາ ນະຄອນ ໄດ້ມອບພັນທະອາກອນໃຫ້ລັດປະຈໍາປີ 2017:

1. ອາກອນມູນຄ່າເພີ່ມ ຈ່າຍທັງໝົດ 546.565.000 ກີບ
2. ອາກອນເງິນເດືອນ ຈ່າຍທັງໝົດ 29.455.000 ກີບ
3. ອາກອນກໍາໄລ ຈ່າຍທັງໝົດ 149.596.000 ກີບ

ລວມເປັນເງິນຈ່າຍໄປທັງໝົດ: **<u>725.616.000 ກີບ</u>**

ຜົນການດໍາເນີນທຸລະກິດ ປະຈໍາປີ 2017 ໄດ້ຮັບການກວດສອບຈາກບໍລິສັດ ພຣາຍວໍເຕີເຮົ້າສຄຸບເປີ ຈໍາກັດ ແລະ ຮັບຮອງຈາກສະພາບໍລິຫານຂອງ ພກພ, ເຊິ່ງສະຫຼຸບລວມມີ:

ລ.ດ	ລາຍການ	ປີ 2017	ປີ 2016
1	ຍອດສິນທັງໝົດ (ລ້ານກີບ)	946.844	1.014.077
2	ໜີ້ສິນທັງໝົດ (ລ້ານກີບ)	142.090	110.588
3	ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	804.754	903.489
4	ລາຍຮັບທັງໝົດ (ລ້ານກີບ)	45.384	99.507
5	ກໍາໄລສຸດທິ (ລ້ານກີບ)	6.725	58.988
6	ກໍາໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	16,56	1.233,70

ຫຼັງຈາກ ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄໍາຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄໍາເຫັນດັ່ງນີ້:

- ຄໍາເຫັນຈາກ ທ່ານ ພອນປະເສີດ ພວງທິບວົງສາ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ: ສະເໜີໃຫ້ຊີ້ແຈ້ງກ່ຽວກັບລາຍລະອຽດ ຂອງລາຍຮັບ ແລະ ກໍາໄລສຸດທິຈາກປີ 2016 ແລະ 2017 ທີ່ມີຄວາມແຕກຕ່າງກັນຫຼາຍ.
  - ❖ ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ: ສະແດງຄວາມຂອບໃຈຕໍ່ການປະກອບຄໍາເຫັນ ແລະ ໄດ້ຊີ້ແຈ້ງວ່າ: ປີ 2016 ກ່າວເຂົ້າສູ່ ປີ 2017 ເປັນຊ່ວງໄລຍະ ທີ່ທາງບໍລິສັດກໍາລັງກຽມການເຂົ້າສູ່ຕະຫຼາດຫຼັກຊັບ ແລະ ໃນ ປີ 2017 ພາຍຫຼັງເຂົ້າຕະຫຼາດຫຼັກຊັບແລ້ວ ບໍລິສັດມີແຜນການພັດທະນາໂຄງການ ຄືມີການລົງທຶນ

ເພີ່ມຂຶ້ນອີກ 05 ໂຄງການ ສະບັບ ເວົ້າເລື່ອງຜົນກຳໄລ ແລະ ລາຍຮັບຂອງບໍລິສັດ ມັນຍັງບໍ່ທັນມີຕົວເລກເພີ່ມ ເປັນຊ່ວງກຳລັງລົງທຶນ ຄິດວ່າໃນປີ 2018 ຈະເຫັນຕົວເລກ ທີ່ອາດເຜີ່ງພໍໃຈ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2017 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2017.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີຮັບຮອງເອົາລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2017, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ: ຈຳນວນ 572.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

<u>ວາລະທີ 02:</u> **ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018**

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ຕໍ່ກອງປະຊຸມດັ່ງນີ້:

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍສຸ້ຊົນ ສຳລັບການກໍ່ສ້າງຂົວທາງ ແລະ ດຳເນີນຈັດຕັ້ງປະຕິບັດ ບໍລິມາດໃຫ້ບັນລຸເປົ້າໝາຍ ກຳນົດໄວ້. ໂຄງການບ້ານອຸ ໃຫ້ບັນລຸໄດ້ 41,72% ກວມມູນຄ່າ 299.839 ລ້ານກີບ; ໂຄງການ ກິໂລເຈ ໃຫ້ໄດ້ 55,37% ກວມມູນຄ່າ 80.881 ລ້ານກີບ ແລະ ໂຄງການອັດຕະປື ມີມູນຄ່າ 40.182 ລ້ານກີບ.

- **ແຜນລາຍຮັບໂຄງການກໍ່ສ້າງຂົວ-ທາງ**

ຊື່ໂຄງການ	ປະຕິບັດໄດ້ຮອດປີ 2017		ແຜນສຸ້ຊົນປະຕິບັດ 2018		ລວມປະຕິບັດໄດ້ທັງໝົດ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ໂຄງການທາງບ້ານອຸ	156.472	45,54	143.367	41,72	299.839	87,26
ໂຄງການທາງກິໂລເຈ	36.096	44,63	44.785	55,37	80.881	100,00
ໂຄງການທາງອັດຕະປື	-	-	40.182	-	40.182	-
ລວມທັງໝົດ	**192.568**	-	**228.334**	-	**420.902**	-

- **ແຜນພັດທະນາໂຄງການໃໝ່ປະຈຳປີ 2018**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍໃນການພັດທະນາໂຄງການໃໝ່ປະຈຳປີ 2018 ດັ່ງນີ້:

1. ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ຊ່ວງທີ 03 ສະຫວັນນະເຂດ - ສາລະວັນ 128 ກມ. ໂຄງການນີ້ຢູ່ໃນຊ່ວງກຳລັງສຳຫຼວດ ແລະ ສຶກສາຄວນເປັນໄປໄດ້ ທາງດ້ານເຕັກນິກ;
2. ໂຄງການກໍ່ສ້າງທາງປູຢາງສອງຊັ້ນ ຢູ່ແຂວງບໍ່ແກ້ວ ລວຍາວ 57,76 ກມ ມູນຄ່າ 226 ຕື້ກີບ;
3. ໂຄງການກໍ່ສ້າງທາງຊາຍແດນລາວ-ກຳປູເຈຍລວຍາວ 154 ກມ ມູນຄ່າ 330 ຕື້ກີບ;
4. ໂຄງການກໍ່ສ້າງທາງປູຢາງສອງຊັ້ນແຕ່ຂົວນ້ຳຖ້ຽງຫາຕາດກວາງຊີ ແຂວງຫລວງພະບາງລວຍາວ 25 ກມ ມູນຄ່າ 154 ຕື້ກີບ;
5. ໂຄງການກໍ່ສ້າງທາງ 4 ເລັນປຸເຍຕິງ ໃນຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ລວຍາວ 6,17 ກມ ມູນຄ່າ 126 ຕື້ກີບ.

ທ່ານ ສິທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນດັ່ງນີ້:

- ຄຳເຫັນຈາກ ທ່ານ ຈັນທະພອນ ເປັນຜູ້ຖືຮຸ້ນມາໃນນາມຜູ້ຕາງໜ້າ: ບັນດາໂຄງການຕ່າງໆທີ່ບໍລິສັດກຳລັງລົງທຶນ ແລະ ກຳລັງຄົ້ນໃຈທີ່ຈະລົງທຶນໃນປີ 2018 ມີຄວາມສຽງບໍ່ ແລະ ອີງໃສ່ປັດໃຈຫຍັງແດ່ ທີ່ຈະເຮັດໃຫ້ບໍ່ເປັນໄປຕາມແຜນທີ່ບໍລິສັດກຳນົດ.
- ທ່ານ ສິທາ ພົມມະຈິດ ສະມາຊິກສະພາບໍລິຫານ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ຊີ້ແຈງວ່າ: ກ່ອນບໍລິສັດຈະຍື່ນແຜນອອກມາ ບໍລິສັດໄດ້ເຮັດສັນຍາ ຫຼື ຂໍ້ຕົກລົງເປັນທີ່ຮຽບຮ້ອຍແລ້ວ. ຄວາມສ່ຽງຂອງບໍລິສັດ ເມື່ອໄດ້ໂຄງການມາແລ້ວ ບາງຄັ້ງອຸປະກອນ ແລະ ວັດປະມານອາດບໍ່ພຽງພໍ ຕ້ອງໄປຫາແຫຼ່ງທຶນ ເພື່ອປະກອບເຂົ້າໃນວຽກທີ່ເຮົາໄດ້ຍັບ, ເຮັດວຽກບໍ່ທັນຕາມໄລຍະເວລາທີ່ລະບຸໄວ້ໃນສັນຍາກັບລັດຖະບານ, ເມື່ອດຳເນີນງານແລ້ວ ລັດຖະບານໄດ້ປະຕິບັດຕາມສັນຍາໃນການຊຳລະ ຫຼື ຖ້າເຝິ່ນຊຳລະບໍ່ທັນຕາມສັນຍາເຝິ່ນກໍ່ຫາທາງອອກໃຫ້ໂດຍມີການອ້ອຍປີ.

ຕໍ່ມາ, ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ: ຈຳນວນ 572.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

<u>ວາລະທີ 03:</u> ພິຈາລະນາ ແລະ ອະນຸມັດ ການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ 6 ເດືອນ ທ້າຍປີ 2017.

ທ່ານ ສິທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ນຳສະເໜີກ່ຽວກັບການອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນ ທ້າຍປີ 2017 ຕໍ່ກອງປະຊຸມດັ່ງນີ້:

ບໍລິສັດມີນະໂຍບາຍຈ່າຍເງິນປັນຜົນ ໃຫ້ແກ່ບັນດາຜູ້ຖືຮຸ້ນໃນແຕ່ລະປີຕາມຜົນການດຳເນີນງານໃນອັດຕາສ່ວນບໍ່ໜຸດ 50 ສ່ວນຮ້ອຍຂອງກຳໄລສຸດທິຂອງບໍລິສັດ ພາຍຫຼັງທີ່ໄດ້ເສຍຄ່າຄ້ຳປະກັນ ແລະ ຄ່າສຳຮອງຕາມລະບຽບການ ແລະ ຄ່າສຳຮອງອື່ນໆທີ່ບໍລິສັດກຳນົດໄວ້. ໂດຍມີເງື່ອນໄຂວ່າການຈ່າຍເງິນປັນຜົນຂຶ້ນຢູ່ກັບສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ຄວາມຈຳເປັນ ແລະ ຄວາມເໝາະສົມອື່ນໆໃນອານາຄົດ. ບໍລິສັດຍັງມີນະໂຍບາຍຈ່າຍເງິນປັນຜົນໂດຍກຳນົດໃຫ້ຜູ້ຖືຮຸ້ນ

ເດີມ (ຜູ້ຖືຮຸ້ນສ່ວນຕັ້ງ 9 ທ່ານ) ໄດ້ຮັບອັດຕາຈ່າຍເງິນປັນຜົນ 50 ສ່ວນຮ້ອຍຂອງອັດຕາຈ່າຍເງິນປັນຜົນຕໍ່ຮຸ້ນທີ່ກຳນົດຈ່າຍໃຫ້ຜູ້ຖືຮຸ້ນທົ່ວໄປ. ໂດຍເງື່ອນໄຂດັ່ງກ່າວມີຜົນເປັນໄລຍະເວລາການຈ່າຍເງິນປັນຜົນ 2 ປີ ພາຍຫຼັງໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ບໍລິສັດມີນະໂຍບາຍຈ່າຍເງິນປັນຜົນ 2 ຄັ້ງຕໍ່ປີ, ໃນປີ 2017 ເອກະສານລາຍງານການເງິນລວມ ກິດຈະການມີກຳໄລສຸດທິ 6.725 ລ້ານກີບ ແບ່ງກຳໄລສຸດທິເຂົ້າຄັງສຳຮອງຕາມກົດໝາຍເປັນຈຳນວນ 673 ລ້ານກີບ ຫຼື 10%.

ຜົນການດຳເນີນທຸລະກິດ ປີ 2017 ບໍລິສັດ ມີກຳໄລສຸດທິຈາກ ທັງໝົດ 6.725 ລ້ານກີບ. ສະພາບໍລິຫານເຫັນດີໃຫ້ກອງປະຊຸມ ອະນຸມັດການຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2017 ພາຍຫຼັງຫັກເຂົ້າຄັງສຳຮອງຕາມລະບຽບການ ຈຳນວນ 673 ລ້ານກີບ, ເທົ່າກັບ 7,45 ກີບ/ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.474 ລ້ານກີບ, ກຳນົດຈ່າຍເງິນປັນຜົນໃນວັນທີ 25 ພຶດສະພາ 2018 ແລະ ກຳນົດມື້ປິດປຶ້ມບັນຊີເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ໃນວັນທີ 26 ມີນາ 2018.

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ສະເໜີໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນປະກອບຄຳຄິດເຫັນດັ່ງນີ້:

- ຄຳເຫັນຈາກ ພອນປະເສີດ ຜອມທິບວົງສາ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ: ຕາມສັນຍາບໍລິສັດຈະຈ່າຍເງິນປັນຜົນ 50 ສ່ວນຮ້ອຍຂອງກຳໄລສຸດທິ, ເປັນເງິນປັນຜົນ 7,45 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.474 ລ້ານກີບ ເມື່ອທຽບກັບກຳໄລສຸດທິ 6.725 ລ້ານກີບ ເຫັນວ່າຈຳນວນ ທີ່ຈະຈ່າຍເງິນປັນຜົນທັງໝົດບໍ່ຮອດ 50 ສ່ວນຮ້ອຍ ຂອງກຳໄລສຸດທິ.
  - ❖ ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ຊີ້ແຈງວ່າ: ຕັ້ງທີ່ກ່າວໃນເບື້ອງຕົ້ນ ບໍລິສັດຈະຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນເດີມ (ຜູ້ຖືຮຸ້ນສ່ວນຕັ້ງ 9 ທ່ານ) ໄດ້ຮັບອັດຕາຈ່າຍເງິນປັນຜົນ 50 ສ່ວນຮ້ອຍ ຂອງອັດຕາຈ່າຍເງິນປັນຜົນຕໍ່ຮຸ້ນທີ່ກຳນົດຈ່າຍໃຫ້ຜູ້ຖືຮຸ້ນທົ່ວໄປ, ເຮັດໃຫ້ເງິນປັນຜົນທີ່ຈະຈ່າຍທັງໝົດ ເມື່ອທຽບກັບກຳໄລສຸດທິບໍ່ຮອດ 50 ສ່ວນຮ້ອຍຂອງກຳໄລສຸດທິ.
- ຄຳເຫັນຈາກທ່ານ ນາງ ຈັນສຸກ ບັນດາສັກ ເປັນຜູ້ຖືຮຸ້ນມາດ້ວຍຕົນເອງ: ບໍລິສັດມີແຜນຈ່າຍເງິນປັນຜົນປີ 2018 ຄືແນວໃດ ຖ້າກຳໄລຂອງບໍລິສັດບໍ່ເປັນໄປຕາມແຜນທີ່ວາງໄວ້.
  - ❖ ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ຊີ້ແຈງວ່າ: ຖ້າກຳໄລຂອງບໍລິສັດບໍ່ເປັນໄປຕາມແຜນກໍ່ຕ້ອງເບິ່ງຕົວຈິງ, ຖ້າບໍລິສັດບໍ່ມີກຳໄລ ຈະຂໍຍົກໄປຈ່າຍຕໍ່ໄປ ແຕ່ໃນປີ 2018 ບໍລິສັດໄດ້ລົງທຶນ 5 ໂຄງການ ມີມູນຄ່າການລົງທຶນທັງໝົດສີ່ແສນກວ່າລ້ານກີບ ແລະ ຄິດວ່າຈະມີຜົນກຳໄລຫຼາຍພໍສົມຄວນ.
- ຄຳເຫັນຈາກ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງຈາກໄທ: ບໍລິສັດ ມີນະໂຍບາຍ ແລະ ການບໍລິຫານກິດຈະການທີ່ດີ (CG) ໃນການຈະຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນເດີມ 50 ສ່ວນຮ້ອຍ. ຢາກໃຫ້ບໍລິສັດກຳນົດວັນທີຜູ້ຖືຮຸ້ນມີສິດຢ່າງໜ້ອຍໜຶ່ງວັນຫຼັງຈາກກອງປະຊຸມ ເພາະອາດເປັນໄປໄດ້ວ່າໃນກອງປະຊຸມອາດເກີດປະເດັນຕົວເລກກຳໄລມີການຄາດເຄື່ອນ ເຮັດໃຫ້ຂໍ້ມູນປ່ຽນໄປ ແຕ່ບໍລິສັດໄດ້ກຳນົດໄວ້ແລ້ວ.
  - ❖ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ຈະນຳເອົາຄຳແນະນຳດັ່ງກ່າວໄປພິຈາລະນາ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນ ທ້າຍປີ 2017.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ 6 ເດືອນ ທ້າຍປີ 2017, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ: ຈຳນວນ 572.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 04: ພິຈາລະນາ ແລະ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະອະນຸມັດ ຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ.

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດ ຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ. ອີງຕາມ ນະໂຍບາຍຂອງບໍລິສັດໃນການຈ່າຍເງິນປັນຜົນ 2 ຄັ້ງຕໍ່ປີ ແລະ ອີງຕາມກົດໝາຍວິສາຫະກິດ ສະບັບປັບປຸງເລກທີ: 46/ ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 155 ກຳນົດໄວ້ "ການຈ່າຍເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນກ່ອນ" ໃນຊ່ວງໄລຍະ 6 ເດືອນຕົ້ນປີຕໍ່ໜ້າ ບໍລິສັດອາດຈະບໍ່ມີວາລະ ທີ່ສຳຄັນທີ່ຕ້ອງຂໍອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ນອກຈາກວາລະ ອະນຸມັດຈ່າຍເງິນປັນຜົນລະຫວ່າງປີ. ສະພາບໍລິຫານຈຶ່ງເຫັນຄວນໃຫ້ກອງປະຊຸມຜູ້ຖືຮຸ້ນ ມອບອຳນາດໃຫ້ແກ່ສະພາບໍລິຫານໃນການປະກາດ ແລະ ອະນຸມັດການຈ່າຍເງິນປັນຜົນລະຫວ່າງປີ ຈາກຜົນການດຳເນີນທຸລະກິດໃນລະຫວ່າງປີ ແລ້ວຈຶ່ງແຈ້ງໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ.

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດ ຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີ: ຈຳນວນ **572.**493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018.

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານຕໍ່ກອງປະຊຸມເພື່ອ ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018, ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ: 46/ ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມ

ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາ ບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຣຸບເປີ ລ ຈຳກັດ.

Price Water House Coopers Co., Ltd ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ (2020-2018) ໂດຍ ມີຄ່າຈ້າງເປັນເງິນ ຈຳນວນ 118.000 ໂດລາສະຫະລັດ ເນື່ອງຈາກວ່າ ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຣຸບເປີ ລາວ ຈຳກັດ ເປັນຜູ້ກວດບັນຊີ ໃຫ້ແກ່ ບໍລິສັດ ກ່ອນການອອກຈຳໜ່າຍຮຸ້ນຄັ້ງທຳອິດຂອງບໍລິສັດ ເຫັນວ່າ ການປະຕິບັດວຽກງານ ແລະ ການປະສານງານ ຢູ່ໃນລະດັບ ດີສົມຄວນ, ມີປະສິບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງ ໃນໜ້າ ທີ, ມີຄວາມລະອຽດຮອບຄອບ ໃນການທົບທວນ ແລະ ເປັນບໍລິສັດກວດສອບບັນຊີ ທີ່ໄດ້ມາດຕະຖານ ລວມທັງໄດ້ຮັບ ຄວາມໄວ້ວ່າໃຈ ໃນລະດັບສາກົນ.

ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 5 ແລ້ວ, ປະທານກອງ ປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນດັ່ງນີ້:

- ຄຳເຫັນຈາກ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງຈາກໄທ: ປີກ່ອນໆບໍລິສັດຊຳລະ ຄ່າກວດສອບເປັນເງິນເທົ່າໃດ? ແລະ ຄ່າກວດສອບ 118.000 ໂດລາສະຫະລັດຕໍ່ປີ ຫຼື ທັງຊ່ວງເວລາປີ (2018-2020)? ແລະ ຢາກໃຫ້ເຮັດເອກະສານໃຫ້ມັນຊັດເຈນວ່າ ຕົວເລກທີ່ໄດ້ມາເປັນຕົວເລກທີ່ບໍລິສັດຈະອະນຸມັດລ່ວງໜ້າ ແລະ ຄົງທີ່ທຸກໆປີ, ປີລະເທົ່າໆກັນຊ່ວງປີ 2018-2020 ແລະ ການຊຳລະປີກ່ອນໆຄວນຈະມີຕາຕະລາງປຽບທຽບໃຫ້ ຜູ້ຖືຮຸ້ນເບິ່ງເພື່ອພິຈາລະນາ.
  - ❖ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ໃຫ້ ທ່ານ ອາໂນໄລ ຮອງຜູ້ອຳນວຍ ການຝ່າຍການເງິນ ຊີ້ແຈງວ່າ: ມູນຄ່າການກວດສອບບັນຊີປີ 2016 ແມ່ນ 47.000 ໂດລາສະຫະລັດຕໍ່ປີ ແລະ ໃນປີ 2017 ແມ່ນ 45.000 ໂດລາສະຫະລັດຕໍ່ປີ ແລະ ບໍລິສັດໄດ້ເຮັດສານຍາໃໝ່ ຄື ປີ 2018-2020 ມູນຄ່າ 118.000 ໂດລາສະຫະລັດ ສະເລ່ຍແລ້ວປະມານປີລະ 39.333 ໂດລາສະຫະລັດຕໍ່ປີ ແລະ ເຮັດເອກະສານຕາມຄຳ ສະເໜີຂອງ Mr. KRAIWAL KADAVANICH.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ ກວດສອບບັນຊີພາຍນອກ ປີ 2018.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ: ຈຳນວນ 572.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

<u>ວາລະທີ 06:</u> ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ຜູ້ອຳນວຍການໃຫ່ຍ ແທນຜູ້ອຳນວຍການໃຫ່ຍ ທີ່ລາອອກ.

ປະທານກອງປະຊຸມ ໄດ້ສະເໜີຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫ່ຍແທນ ຜູ້ອຳນວຍການໃຫ່ຍທີ່ລາອອກ. ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 123 ກຳນົດວ່າ " ຜູ້ອຳນວຍການຖືກເລືອກຕັ້ງຕາມກຳລະນີດັ່ງນີ້: (3) ຕຳແໜ່ງຜູ້ອຳນວຍການທີ່ວ່າງລົງໃນ ລະຫວ່າງສອງກອງປະຊຸມສາມັນຂອງຜູ້ຖືຮຸ້ນແມ່ນແຕ່ງຕັ້ງໂດຍສະພາບໍລິຫານ ເຊິ່ງວັນທີ 28 ກຸມພາ 2018 ທ່ານ ບາງ ພິ ໄລພອນ ວົງປະເສີດ ໄດ້ລາອອກຈາກການເປັນຜູ້ອຳນວຍການຂອງບໍລິສັດ. ໃນກອງປະຊຸມສະພາບໍລິຫານ ຄັ້ງທີ I/2018

ເຊິ່ງຈັດຂຶ້ນໃນວັນທີ 7 ກຸມພາ 2018 ກອງປະຊຸມມີມະຕິແຕ່ງຕັ້ງ ທ່ານ ສີທາ ພົມມະຈິດ ເປັນຜູ້ອຳນວຍການຄົນໃໝ່ ໂດຍໃຫ້ຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງຜູ້ອຳນວຍການທີ່ລາອອກໄປແລ້ວ.

ຫຼັງຈາກ ປະທານກອງປະຊຸມ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄຳຄິດເຫັນດັ່ງນີ້:

- ຄຳເຫັນຈາກ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງຈາກໄທ: ຂໍເຫດຜົນທີ່ຜູ້ອຳນວຍການເກົ່າເຜີ່ນລາອອກ ແລະ ຄວນຮັບຮອງການລາອອກຂອງ ທ່ານ ສີທາ ພົມມະຈິດ ຈາກຄະນະກຳມະການກວດສອບກ່ອນຈະແຕ່ງຕັ້ງເປັນຜູ້ອຳນວຍການ.
  - ❖ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ໃຫ້ ທ່ານ ອາໃບໄລ ສີຫາລາດ ຮອງຜູ້ອຳນວຍການຝ່າຍການເງິນ ຊີ້ແຈງວ່າ: ເພາະຜູ້ອຳນວຍການເກົ່າໄດ້ໝົດສັນຍາກັບບໍລິສັດ ແລະ ທ່ານ ສີທາ ພົມມະຈິດ ໄດ້ອອກຈາກຄະນະກຳມະການກວດສອບແລ້ວແຕ່ກ່າວໃນວາລະທີ 8.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ແທນຜູ້ອຳນວຍການໃຫຍ່ ທີ່ລາອອກ.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ແທນຜູ້ອຳນວຍການໃຫຍ່ທີ່ລາອອກ, ດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ: ຈຳນວນ 567.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

<u>ວາລະທີ 07:</u> **ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາ**

ບໍລິຫານທີ່ລາອອກ.

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ລາອອກ. ອີງຕາມຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານຂອງບໍລິສັດຈົດທະບຽນ ເລກທີ 0024/ຄຄຊ ລົງວັນທີ 26 ຖລາ 2016 ມາດຕາ 9 ການແຕ່ງຕັ້ງສະມາຊິກສະພາບໍລິຫານ "ສະມາຊິກສະ ພາບໍລິຫານ ຖືກແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ" ອາຍຸການຂອງສະມາຊິກສະພາບໍລິຫານທີ່ຖືກແຕ່ງ ຕັ້ງໃໝ່ນັ້ນແມ່ນເທົ່າກັບອາຍຸ ການຂອງສະພາບໍລິຫານຂອງຊຸດເກົ່າ ທີ່ຍັງເຫຼືອ.ໃນວັນທີ 28 ກຸ່ມພາ 2018 ທ່ານ ນາງ ວິໄລພອນ ວົງປະເສີດ ໄດ້ລາ ອອກ ຈາກການເປັນສະມາຊິກສະພາບໍລິຫານ ຂອງບໍລິສັດ. ໃນກອງປະຊຸມສະພາບໍລິຫານ ຄັ້ງທີ I/2018 ເຊິ່ງຈັດຂຶ້ນໃນ ວັນທີ 7 ກຸ່ມພາ 2018 ກອງປະຊຸມມີມະຕິຮັບຮອງເອົາ ທ່ານ ພຸຂົງ ອ້ວນລະມະນີ ເປັນສະມາຊິກສະພາບໍລິຫານ ໂດຍໃຫ້ ສະມາຊິກສະພາບໍລິຫານ ທີ່ໄດ້ຮັບການແຕ່ງຕັ້ງ ມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອ ຂອງສະມາຊິກສະພາບໍລິຫານ ທີ່ ລາອອກໄປແລ້ວ.

ປະທານກອງປະຊຸມ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນດັ່ງນີ້:

- ຄຳເຫັນຈາກ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງຈາກໄທ: ທ່ານ ພຸຂົງ ອ້ວນລະ ມະນີ ຄວນຈະມາແທນ ໃນວາລະທີ 6 ເຫັນດີວ່າ ທ່ານ ສີທາ ພົມມາຈິດ ໄດ້ລາອອກຈາກຕຳແໜ່ງ ຄະນະກຳມະການ

ກວດສອບ ເພື່ອໄປແທນຕຳແໜ່ງຜູ້ອຳນວຍການໃຫ່ຍທີ່ລາອອກ ແລະ ໃນວາລະນີ້ກໍ່ມາບອກວ່າ ທ່ານ ພຸຍົງ ອ້ວນລະມະນີ ກໍ່ມາແທນຕຳແໜ່ງທ່ານທີ່ລາອອກ ເຊິ່ງເປັນຄົນດຽວກັນ. ຄວນໃສ່ຄຳວ່າ ທ່ານ ພຸຍົງອ້ວນລະມະນີ ມາແທນຕຳແໜ່ງທີ່ວ່າງລົງຂອງ ທ່ານ ສີທາ ພົມມະຈິດ.

- ❖ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ໄດ້ຊີ້ແຈງວ່າ: ທ່ານ ພີໄລພອນ ວົງປະເສີດ ທີ່ລາອອກໄປ ທ່ານດຳລົງສອງຕຳແໜ່ງຄື ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່. ທ່ານ ສີທາ ພົມມະຈິດ ແທນຕຳແໜ່ງຜູ້ອຳນວຍການໃຫຍ່ ແລະ ທ່ານ ພຸຍົງ ອ້ວນລະມະນີ ເປັນສະມາຊິກສະພາບໍລິຫານ ແທນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ແທນສະມາຊິກສະພາບໍລິຫານທີ່ລາອອກ.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ລາອອກ, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ 572.491.400 ສຽງ ເທົ່າກັບ 99,9997 ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກປະຊຸມ;
- ບໍ່ເຫັນດີ: ຈຳນວນ 2 ສຽງ ເທົ່າກັບ 0,0004 ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 08</u>: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ.

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມ ເພື່ອພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ. ອີງຕາມຂໍ້ຕົກລົງ ວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ເລກທີ: 0024/ຄຄຊ ລົງວັນທີ " 18 ມາດຕາ 2016 ຖລາ 26 ສະມາຊິກຂອງຄະນະກຳມະການກວດສອບ ຕ້ອງປະກອບດ້ວຍສະມາຊິກສະພາບໍລິຫານ ທີ່ບໍ່ດຳລົງຕຳແໜ່ງ ຜູ້ອຳນວຍການ" ເຊິ່ງ ທ່ານ ສີທາ ພົມມະຈິດ ໄດ້ດຳລົງຕຳ ແໜ່ງເປັນຜູ້ອຳນວຍການ ຈຶ່ງສະເໜີແຕ່ງຕັ້ງ ທ່ານ ພຸຍົງ ອ້ວນລະມະນີ ເປັນສະມາຊິກຂອງຄະນະກຳມະການກວດສອບແທນ ແລະ ແຕ່ງຕັ້ງ ທ່ານ ທ່ານ ສີທາ ພົມມະຈິດ ເປັນຄະນະກຳມະການກຳນົດຄ່າຕອບແທນ ແທນ ທ່ານ ນາງ ພີໄລພອນ ວົງປະເສີດ ໄດ້ລາອອກ.

ປະທານກອງປະຊຸມ ໄດ້ລາຍງານໄດຍຫຍໍ້ ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ: ຈຳນວນ 572.493.400 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.**

ທ່ານປະທານກອງປະຊຸມ ໄດ້ແຈ້ງໃຫ້ຜູ້ຖືຮຸ້ນ ຊາບວ່າ ກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະກອງປະຊຸມ ຕັ້ງ ທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນອື່ນໆ ຕໍ່ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຊຶ່ງຜູ້ຖືຮຸ້ນ ໄດ້ມີບາງຄຳເຫັນດັ່ງນີ້:

- ຄຳເຫັນຈາກ Mr. KRAIWAL KADAVANICH ເປັນຜູ້ຖືຮຸ້ນມາດ້ວຍຕົນເອງຈາກໄທ:
  1. ການເຂົ້າເອກະສານ ແປຖືກຕ້ອງກົງກັນ ລະຫວ່າງ ພາສາລາວ ແລະ ພາສາອັງກິດ ມີຂໍ້ຜິດພາດພຽງແຕ່ຕົວສະກົດ ເຊິ່ງບໍ່ເຮັດໃຫ້ຄວາມໝາຍຂອງພາສາປ່ຽນໄປ;
  2. ໃນພາສາອັງກິດລ້ານກີບ ບໍ່ຄວນໃຊ້ LAKm ຄວນໃຊ້ M.LAK ເພື່ອໃຫ້ຖືກຕ້ອງ ແລະ ສອດຄອງກັບ ລັກສະນະທຸລະກິດ.

❖ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ຈະນຳເອົາແນະນຳດັ່ງກ່າວໄປປະຕິບັດ ໃນການຈັດກອງປະຊຸມຄັ້ງຕໍ່ໄປ.

ປະທານກອງປະຊຸມ ໄດ້ລາຍງານ ໃນຕອນທ້າຍຂອງການປະຊຸມ ຜູ້ເຂົ້າຮ່ວມທັງໝົດ 164 ທ່ານ ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ຈຳນວນ 24 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຜູ້ຖືຮຸ້ນຈຳນວນ 140 ທ່ານ, ຖືຮຸ້ນລວມກັນທັງໝົດ 572.493.400 ຮຸ້ນ, ເທົ່າກັບ 98,37 ສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດຂອງ ບໍລິສັດ.

ກອງປະຊຸມບໍ່ມີບັນຫາເພີ່ມເຕີມທີ່ຈະພິຈາລະນາ, ທ່ານປະທານກອງປະຊຸມໄດ້ກ່າວປິດກອງປະຊຸມລົງຢ່າງເປັນ ທາງການ ໃນເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ຜູ້ບັນທຶກກອງປະຊຸມ

I. ບົດລາຍງານປະຈຳປີ 2018


ຄວາມຄືບໜ້າການດຳເນີນທຸລະກິດໃນປີ 2018

ວຽກງານດ້ານບຸກຄະລາກອນ

ການດຳເນີນວຽກງານດ້ານບຸກຄະລາກອນໃນປີ 2018 ແມ່ນໄດ້ເນັ້ນນັກການຝຶກອົບຮົມ, ປັບປຸງໂຄງຮ່າງ ການຈັດຕັ້ງຂອງອົງກອນຈາກການເປັນບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.
ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດ ການສຳຫຼວດເພື່ອກະກຽມສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດ ວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວາງອອກ.

ພົນງານຂອງປີ 2018

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2018 ມີຈຳນວນ 176 ຄົນ
- ປະກາດຮັບພະນັກງານໃຫມ່ຈຳນວນ 5 ຄົນ ເພື່ອຜົ້ມຂີດຄວາມສາມາດ ແລະ ປະສິດທິຜົນໃນການດຳເນີນທຸລະ ກິດ.
- ການລາອອກ 2 ຄົນ
- ຖືກປົດອອກ 0 ຄົນ
- ຖືກເລື່ອນຕຳແໜ່ງ 7 ຄົນ



➢ **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 0,74%
- ຊ່ວຍເຫລືອກົມທານບຳຍາດສາຍຕົ້ງພະນັກງານເສຍຊີວິດ: 8.000.000 ກີບ
- ຊ່ວຍເຫລືອພະນັກງານເກີດລູກ: 3.000.000 ກີບ

➢ **ຈັດກິດຈະກຳສ້າງຄວາມອາມັກຄີໃນໝູ່ພະນັກງານໃຫ້ມາດ 1-4 (ເດືອນ 1-12)**

- ຈັດກິດຈະກຳກິລາ (ເຕະບານ, ເປຕັ້ງ) 12 ຄັ້ງ
- ຈັດງານລ້ຽງໃນເທດສະການຕ່າງໆ (ປີໃໝ່ສາກົນ, ວັນແມ່ຍິງ, ສົງການ ແລະ ວັນກຳມະກອນ...)

➢ **ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ**

- ຈັດສົ່ງພະນັກງານໄປຮ່ວມການຝຶກອົບຮົມ ແລະ ຖອດຖອນບົດຮຽນກັບອົງກອນຕ່າງໆ ທັງພາຍໃນແລະ ຕ່າງປະເທດ ເພື່ອມາພັດທະນາອົງກອນໃຫ້ມີຄວາມກ້າວໜ້າ, ທັນສະໄໝ ພ້ອມທີ່ຈະຮັບໃຊ້ສັງຄົມ.

ວຽກງານດ້ານການຕະຫລາດ

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດ ຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ ທັນກັບ ເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການ ທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນ ເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ປະຈຸບັນ ບໍລິສັດຂອງພວກເຮົາກຳລັງກະກຽມເຊັນ MOU ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດຜູ້ສີ່ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບ ການຄັດເລືອກເຂົ້າຮອບສຸດທ້າຍ, ນອກນັ້ນພວກເຮົາກຳລັງດຳເນີນໂຄງການອະສັງຫາລິມະຊັບໂດຍການກໍ່ສ້າງໂຮງແຮມ ລະດັບ 4-5 ດາວທີ່ນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ, ກະກຽມສະເໜີລາຄາສຳລັບໂຄງການໃຫຍ່ໆຂອງ ADB ແລະ WB ອີກຫຼາຍໂຄງການ.

- **ລັກສະນະກຸ່ມລູກຄ້າເປົ້າໝາຍ**

ກຸ່ມລູກຄ້າເປົ້າໝາຍຂອງບໍລິສັດສາມາດແບ່ງໄດ້ເປັນລູກຄ້າຈາກພາກລັດ ແລະ ພາກເອກະຊົນ ໂດຍສະເພາະແມ່ນການ ກໍ່ສ້າງພື້ນຖານໂຄງລ່າງທີ່ຢູ່ໃນເຂດພາກເໜືອຂອງປະເທດເປັນສ່ວນໃຫຍ່ ແລະ ຂະຫຍາຍໄປຍັງແຂວງອື່ນໆ ຫຼື ໃນ ຂົງເຂດທົ່ວປະເທດ. ແຜນການຕະຫຼາດ ແມ່ນເນັ້ນໜັກ ໃສ່ ພາກເອກະຊົນ ແລະ ຂະແໜງ ການພັດທະນາໃນການກໍ່ສ້າງ ໂຄງການຂະໜາດນ້ອຍ, ກາງ, ແລະ ໃຫຍ່ ຕາມລຳດັບ.

- **ການຊອກຫາໂຄງການ**

ຊ່ອງທາງການຈັດຈຳໜ່າຍຂອງບໍລິສັດແມ່ນໄດ້ມີການຮັບວຽກກໍ່ສ້າງຈາກພາກລັດໂດຍກົງ ທັ້ງໂດຍການຍື່ນຊອງປະມູນ ເພື່ອສະເໜີລາຄາ ແລະ ການເຈລະຈາຕໍ່ລອງວຽກທີ່ຕ້ອງຕົກລົງກັບເຈົ້າຂອງໂຄງການ ໂດຍບໍລິສັດຈະໄດ້ຮັບຊອງປະມູນໂຄງການ ເພື່ອນຳມາປະມວນສະເໜີລາຄາຕາມຂໍ້ກຳນົດ ໃນບາງຄັ້ງບໍລິສັດໄດ້ສະເໜີໂຄງການໄປຍັງເຈົ້າຂອງໂຄງການໂດຍກົງ ເພື່ອພິຈາລະນາອະນຸມັດໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ. ແຕ່ທັ້ງນັ້ນ, ທາງເຈົ້າຂອງໂຄງການ ຕ້ອງເຂົ້າມາກວດສອບຄວາມເປັນໄປໄດ້ຂອງການກໍ່ສ້າງເສັ້ນທາງ ຫຼື ໂຄງການ ດັ່ງກ່າວ. ເພື່ອສຶກສາຄວາມເປັນໄປໄດ້ໃນໂຄງການນັ້ນໆ. ເພື່ອເປັນການຫຼຸດຄວາມສ່ຽງຈາກການແຂ່ງຂັນໃນການປະມູນໂຄງການ.

- **ກົນລະຍຸດການແຂ່ງຂັນ**

ບໍລິສັດແມ່ນມີນະໂຍບາຍທີ່ຈະເພີ່ມວຽກງານກໍ່ສ້າງໃຫ້ຫຼາຍເພີ່ມຂຶ້ນ ທັ້ງໃນຮູບແບບຂອງໂຄງການທາງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ບັນລຸເປົ້າໝາຍຫຼັກຂອງບໍລິສັດ ເປັນບໍລິສັດຜູ້ນຳທາງດ້ານການກໍ່ສ້າງ ແລະ ພັດທະນາໃນປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນ. ບໍລິສັດໄດ້ພັດທະນາກົນລະຍຸດຂອງການແຂ່ງຂັນ ເອົາໄວ້ດັ່ງຕໍ່ໄປນີ້ ເຊິ່ງຊ່ວຍໃຫ້ເກີດປະໂຫຍດໃນດ້ານການແຂ່ງຂັນ ແລະ ເພື່ອບັນລຸເປົ້າໝາຍຂອງບໍລິສັດ.

ກ. ບໍລິສັດຮັບເໝົາກໍ່ສ້າງແບບຄົບວົງຈອນ

ບໍລິສັດເປັນບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ ແລະ ມີຄວາມພ້ອມໃນການສະເໜີໂຄງການ ຫຼື ມີຄວາມພ້ອມໃນການເຂົ້າປະມູນໂຄງການທັ້ງຂອງໂຄງການພາກລັດ ແລະ ພາກເອກະຊົນ ເຮັດໃຫ້ສິ່ງຜົນດີຕໍ່ຜົນປະກອບການ ຈະເຮັດໃຫ້ບໍລິສັດສາມາດເຂົ້າເປັນສ່ວນໜຶ່ງໃນຜູ້ນຳດ້ານອຸດສາຫະກຳການກໍ່ສ້າງຊັ້ນນຳຂອງປະເທດ ເຊິ່ອກວົງທຶນໃນອຸດສາຫະກຳພື້ນຖານໂຄງລ່າງເປັນຫຼັກ ແລະ ໂຄງການໃນພາກອະສັງຫາລິມະຊັບ ແນໃສ່ຄວາມຮູ້ ຄວາມຊ່ຽວຊານດ້ານເຕັກນິກການກໍ່ສ້າງຂອງບຸກຄະລາກອນ, ການນຳໃຊ້ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ ແນໃສ່ການແຂ່ງຂັນໃນໂຄງການທີ່ມີຂະໜາດໃຫຍ່ ແລະ ສະລັບຊັບຊ້ອນຫຼາຍຂຶ້ນ. ການມີຜູ້ຊ່ຽວຊານດ້ານກໍ່ສ້າງ ແລະ ແຮງງານທີ່ມີປະສົບການ ໃນການກໍ່ສ້າງຢ່າງກວ້າງຂວາງ, ອັນເຮັດໃຫ້ເປັນຜົນສຳເລັດຂອງບໍລິສັດ.

ຂ. ຄຸນະພາບ ແລະ ມາດຕະຖານຂອງວຽກງານ

ການຮັກສາຄຸນະພາບ ແລະ ມາດຕະຖານຂອງວຽກງານ ເປັນເຫດຜົນຫຼັກທີ່ບໍລິສັດປະສົບຜົນສຳເລັດທີ່ມາຈາກປະຫວັດການດຳເນີນວຽກງານທີ່ດີຂອງບໍລິສັດ ທັ້ງໃນດ້ານການເຮັດວຽກໃຫ້ແລ້ວຕາມກຳນົດເວລາ, ຄວາມໜ້າເຊື່ອຖື ແລະ ຄຸນະພາບຂອງວຽກງານ ມີຄວາມສາມາດໃນການດຳເນີນງານຕາມສັນຍາ ແລະ ການບໍລິການລູກຄ້າດ້ວຍນ້ຳໃຈໃຫ້ເປັນຢ່າງດີ ເອົາໃຈໃສ່ໃນລາຍລະອຽດ ແລະ ຊື່ສັດຕໍ່ລູກຄ້າ.

ຄ. ການສົ່ງມອບໃຫ້ທັນກັບເວລາທີ່ກຳນົດ

ວຽກງານກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນຖະໜົນຫົນທາງເປັນວຽກທີ່ໃຫຍ່ ຕ້ອງໃຊ້ໄລຍະເວລາຍາວນານພໍສົມຄວນ ບໍລິສັດແມ່ນຕ້ອງການສົ່ງມອບງານໃຫ້ທັນກັບເວລາ ໃນແບບແຜນການທີ່ໄດ້ກຳນົດໄວ້ ເຊິ່ງບໍລິສັດເອງແມ່ນມີຊື່ສຽງໃນດ້ານການສົ່ງມອບງານໃນກົງກັບເວລາຖືໄດ້ວ່າເປັນໜຶ່ງປັດໃຈຫຼັກໃນການປະສົມຜົນສຳເລັດຂອງທຸລະກິດຮັບເໝົາກໍ່ສ້າງທີ່ຕ້ອງໃຊ້ຄວາມຮັບຜິດຊອບທີ່ສູງມາເປັນໄລຍະເວລາຍາວນານ

ບໍລິສັດແມ່ນມີການບໍລິຫານງານຢ່າງເປັນລະບົບ ມີການວາງແຜນງານທຸກຂັ້ນຕອນ ພັດທະນາສັກກະຍະພາບການເຮັດວຽກຂອງບຸກຄະລາກອນຢ່າງຕໍ່ເນື່ອງ ເພື່ອໃຫ້ການປະຕິບັດງານມີປະສິດທິພາບ ແລະ ສຳເລັດພາຍໃນລະຍະເວລາທີ່ກຳນົດໄວ້.

ງ. ເອົາໃຈໃສ່ໃນລາຍລະອຽດຂອງໂຄງການ

ບໍລິສັດແມ່ນມີການເອົາໃຈໃສ່ໃນລາຍລະອຽດໂຄງການຢ່າງຮອບຄອບໃນໂຄງການຕ່າງໆ ດ້ວຍຜູ້ບໍລິ ຫານ ແລະ ນັກ ວິສະວະກອນທີ່ມີປະສົບການສູງ, ມີຄວາມຊຳນານໃນການກໍ່ສ້າງຂົວ-ທາງ ແລະ ກໍ່ສ້າງອື່ນໆ ເພື່ອກວດສອບກິດຈະກຳໃນ ວຽກການກໍ່ສ້າງແຕ່ລະໂຄງການ ເຊິ່ງຊ່ວຍໃຫ້ບໍລິສັດມີການປັບປຸງປະສິດທິພາບຢູ່ສະເໝີ ແລະ ຫຼຸດຜ່ອນຕົ້ນທຶນການ ກໍ່ສ້າງໃນຮູບແບບຕ່າງໆ. ນອກຈາກນີ້, ບໍລິສັດມີແຜນວຽກງານທີ່ຈະບັນລຸເປົ້າໝາຍໂດຍພັດທະນາທາງດ້ານແນວຄິດໃນ ດ້ານການບໍລິຫານ, ການນຳໃຊ້ເຕັກໂນໂລຊີສະໄໝໃໝ່ ເພື່ອຊ່ວຍໃນການປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຕົ້ນທຶນ ການກໍ່ສ້າງໃນຮູບແບບຕ່າງໆຕໍ່ໄປ.

PCD ໄດ້ມີການສະຫນັບສະຫນຸນ ບຸນຊ່ວງເຮືອຫຼວງພະບາງ, ບຸນຊ່ວງເຮືອວຽງຈັນ ແລະ ບຸນທາດຫຼວງ ເຊິ່ງເປັນຫນຶ່ງ ໃນແຜນການໃຄສະບາ ການຕະຫຼາດ ຂອງ ບໍລິສັດ.

ຈ. ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ

ການທີ່ບໍລິສັດແມ່ນມີຄວາມ ຊື່ສັດ ຈິງໃຈ ແລະ ເປັນທຳ ກັບພາກສ່ວນທີ່ກ່ຽວຂ້ອງທັ້ງໃນພາກສ່ວນທີ່ກ່ຽວຂ້ອງກັບເຈົ້າ ຂອງໂຄງການ ທັ້ງຜູ້ອອກແບບ ແລະ ຜູ້ຄວບຄຸມວຽກ ເນື່ອງຈາກວ່າຜູ້ອອກແບບເປັນຜູ້ບຸກຄົນທີ່ຮູ້ກ່ຽວກັບລາຍລະອຽດ ຂອງໂຄງການກໍ່ສ້າງຕ່າງໆ ເຊິ່ງການທີ່ ຊື່ສັດ ຈິງໃຈ ຍ້ອນເຫດຜົນນີ້ເອງ ຕັ້ງແຕ່ອະດີດທີ່ຜ່ານມາ ຈຶ່ງເຮັດໃຫ້ບໍລິສັດກ້າວ ຂຶ້ນເປັນບໍລິສັດທີ່ມີຊື່ສຽງ, ມີຄວາມສະນິດສະນົມກັບລູກຄ້າ ມີສາຍສຳພັນທີ່ດີກັບຜູ້ອອກແບບ ຜູ້ຄວບຄຸມວຽກ ແລະ ຄູ່ ຮ່ວມງານທຸກຝ່າຍມາໂດຍຕະຫຼອດ.

ສ. ການໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈຈາກລູກຄ້າ

ຈາກຜົນງານຄວາມສຳເລັດໃນອະດີດທີ່ຜ່ານມາຂອງບໍລິສັດ ແມ່ນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ໄດ້ເປັນຢ່າງດີ ເຮັດ ໃຫ້ບໍລິສັດແມ່ນໄດ້ຮັບການຍອມຮັບຈາກລູກຄ້າເຈົ້າຂອງໂຄງການ. ແລະໄດ້ຮັບການຕິດຕໍ່ຈາກໜ່ວຍງານພາກລັດໃຫ້ ບໍລິສັດເຂົ້າຮ່ວມປະມູນໂຄງການຢ່າງຕໍ່ເນື່ອງ.

ວຽກງານດ້ານຍຸດທະສາດອົງກອນ

ຈາກຄວາມຕັ້ງໃຈໃນການມອບສິ່ງທີ່ດີທີ່ສຸດ ສູ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທີ່ໄດ້ຮັບຈາກລູກຄ້າ, ພວກເຮົາ ພ້ອມແລ້ວທີ່ຈະກ້າວໄປສູ່ເປົ້າໝາຍໃນອະນາຄົດ:

- ຂະຫຍາຍຖານລູກຄ້າໄປສູ່ພາກເອກກະຊົນ ທັ້ງໃນໂຄງການກໍ່ສ້າງແລະພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.
- ລິເລີ່ມໂຄງການພັດທະນາອະສັງຫາລິມະຊັບເພື່ອຕອບສະໜອງການຂະຫຍາຍຕົວຂອງຕົວເມືອງໃນທົ່ງປະເທດ.
- ຮັກສາຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກຖານລູກຄ້າທີ່ໄດ້ຮັບມາຕະຫຼອດໄລຍະເກືອບ 20 ປີ ດ້ວຍການ ໃຫ້ຄວາມສຳຄັນກັບຄຸນນະພາບ, ມາດຕະຖານ ການສົ່ງມອບງານກົງເວລາ ແລະ ບໍລິການທີ່ຊື່ສັດ ໃສ່ໃຈທຸກລາຍ ລະອຽດ.

ການມອບຜົນຫະອາກອນ

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ດຳເນີນງານພາຍໃຕ້ກົດໝາຍກົດໝາຍຂອງ ສປປລາວ ຕະຫລອດມາ ໂດຍສະເພາະກົດໝາຍ ສ່ວຍສາອາກອນໄດ້ປະຕິບັດຢ່າງເຂັ້ມງວດ ໂດຍຈະເຫັນໄດ້ຈາກຕາຕະລາງການມອບພັນທະດ້ານຫລຸ່ມນີ້.

ການມອບພັນທະອາກອນໃຫ້ລັດປະຈຳ ປີ 2018

ລ/ດ	ລາຍການ	ໜ່ວຍ	ຈຳນວນເງິນ (ກີບ)
1	ອາກອນມູນຄ່າເພີ່ມ		0
2	ອາກອນເງິນເດືອນ		16.524.000
3	ອາກອນກຳໄລ		0
	ລວມ		**16.524.000**

ໝາຍເຫດ: ສຳລັບຕົວເລກຜົນການດຳເນີນທຸລະກິດ ແມ່ນອີງຕາມເອກະສານລາຍງານການເງິນ.

II. ຜົນການດຳເນີນທຸລະກິດ ປະຈຳປີ 2018

ບໍລິສັດ ພູລີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2018

ຊັບສິນ	ຍຶດ ອະທິບາຍ	2018 ລ້ານກີບ	2017 ລ້ານກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການຄຽບເທົ່າເງິນສົດ	3	54	540
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	4	185,588	463,336
ເຄື່ອງໃນຂາຍ		322	22
ຊັບສິນໝຸນວຽນອື່ນໆ	5	4,073	1,371
ລວມຊັບສິນໝຸນວຽນ		**190,037**	**465,269**
ຊັບສິນບໍ່ໝຸນວຽນ			
ຊັບສິນຄົງທີ່ ມີຕົວຕົນ, ສຸດທິ	6	478,712	479,757
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ		5	-
ເງິນໃຫ້ກູ້ຢືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ອື່ນໆ	7	861	1,818
ລວມຊັບສິນບໍ່ໝຸນວຽນ		**479,578**	**481,575**
ລວມຊັບສິນ		**669,615**	**946,844**
ໜີ້ສິນ ແລະ ທຶນຕົນເອງ			
ໜ້ຂນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	48,150	43,009
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ສະຖາບັນການເງິນ	9	38,422	36,000
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	9	3,200	3,800
ໜີ້ຕ້ອງສົ່ງອາກອນ ກຳໄລ	10	8,481	8,674
ໜີ້ສິນໝຸນວຽນອື່ນໆ	11	40,617	36,107
ລວມໜີ້ສິນໝຸນວຽນ		**138,870**	**127,590**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	9	-	5,000
ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	9	11,885	9,500
ລວມໜີ້ສິນບໍ່ໝຸນວຽນ		**11,885**	**14,500**
ລວມໜີ້ສິນ		**150,755**	**142,090**
ທຶນຕົນເອງ			
ທຶນ/ຈັດຍະບຽນ		582,000	582,000
ສ່ວນເກີນມູນຄ່າຫຸ້ນ	12	12,540	12,540
ກຳໄລສະສົມ			
ຈັດສັນ - ສຳຮອງຕາມກົດໝາຍ	13	11,572	11,572
ບໍ່ໄດ້ຈັດສັນ		(87,252)	198,642
ລວມທຶນຕົນເອງ		**518,860**	**804,754**
ລວມໜີ້ສິນ ແລະ ທຶນຕົນເອງ		**669,615**	**946,844**

ທ່ານ ສີຫາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ພະຈິກ 2019

ທ່ານ ອະໂນໄຊ ສີຫາລາດ
ຫົວໜ້າການເງິນ
ວັນທີ: 22 ພະຈິກ 2019

บริษัท พูลี ก่อสร้าง และ พัฒนาเมือง มหาชน

ใบฉายงานยินได้สิน
สำหรับ ปีสิ้นสุดวันที่ 31 ธันวา 2018

	ยิด ยะหิบาย	2018 ล้านกีบ	2017 ล้านกีบ
ลายได้จาก ภาบก่อสร้าง		-	45,384
ต้นทุนภาบก่อสร้าง	15	-	(16,238)
กำไลออมขับยิน		-	**29,146**
ลายขับยิบๆ		3,903	729
ยาถยิบจากภาบเดียบถ่า	15	(267,390)	-
ลายจ่ายบริหาบ	15	(11,271)	(10,104)
กำไล/(ยาถยิบ)จากผิดถาบแลกปุ่บ สุถยิ		(358)	(2,067)
ลายจ่ายดอกเบี้ย	16	(8,305)	(9,890)
กำไล/(ยาถยิบ) ท่อบจ่ายจากท่อบกำไล		**(283,421)**	**7,814**
ยาทอบกำไล	17	-	(1,089)
กำไล/(ยาถยิบ) สุถยิสำลับปี		**(283,421)**	**6,725**
กำไลต่อหุ้บ			
ยิบฐายกำไล(ยาถยิบ) ต่อหุ้บ	18	(486.98)	16.56

ท่าบ สิยก บิบมะจัก
ผู้อำบวยภาบใหญ่
วับที่: 22 ธะจิภา 2019

ท่าบ ยะโบโล สิทาลาบ
ติลอิบภาบเงิบ
วับที่: 22 ธะจิภา 2019

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຊ້ອນປ່ຽນແປງທຶນຂອງຜູ້ຖືຫຸ້ນ
ສຳລັບ ປີສິ້ນສຸດວັນທີ 31 ທັນວາ 2018

	ຍຶດ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ບໍ່ໄດ້ຈັດສັນການໄລ່ລະ ສົມ/(ຂາດທຶນ) ລ້ານກີບ	ລວມ ລ້ານກີບ
ຍອດຍົກມາໃນວັນທີ 1 ມັງກອນ 2017		700,000	-	10,899	192,590	903,489
ເພີ່ມຂຶ້ນໃນທຶນຈົດທະບຽນ	12	82,000	12,540	-	-	94,540
ຫຼຸດລົງທຶນຈົດທະບຽນ	12	(200,000)	-	-	-	(200,000)
ສຳຮອງເງິນຕາມກົດໝາຍ	13	-	-	673	(673)	-
ກຳໄລພາຍໃນປີ		-	-	-	6,725	6,725
ຍອດເຫຼືອໃນວັນທີ 31 ທັນວາ 2018		**582,000**	**12,540**	**11,572**	**198,642**	**804,754**
ຍອດຍົກມາໃນວັນທີ 1 ມັງກອນ 2018		582,000	12,540	11,572	198,642	804,754
ຈ່າຍເງິນປັນຜົນ	14	-	-	-	(2,473)	(2,473)
ຂາດທຶນພາຍໃນປີ		-	-	-	(283,421)	(283,421)
ຍອດເຫຼືອໃນວັນທີ 31 ທັນວາ 2018		**582,000**	**12,540**	**11,572**	**(87,252)**	**518,860**

ທ່ານ ສິທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ພະຈິກ 2019

ທ່ານ ອະໄນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ: 22 ພະຈິກ 2019

ບົດອະທິບາຍຂ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 10 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ໃບລາຍງານ ກະແສເງິນສົດ
ສຳລັບ ປີສິ້ນສຸດວັນທີ 31 ທັນວາ 2018

	ໝາຍ ເຫດ	2018 ລ້ານກີບ	2017 ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລ / (ຂາດທຶນ) ກ່ອນອາກອນກຳໄລສຳລັບປີ		(283,421)	7,814
ດັດແກ້ເພື່ອຄືນຍອດກຳໄລສຸດທິ ກັບ ເງິນສົດສຸດທິ			
ຂາດທຶນໃນອັດຕາແລກປ່ຽນ		(2,029)	(1,001)
ຄ່າຫຼຸ້ຍຫ້ຽນ	6	3,848	3,354
ຄ່າຫຼື້ອມມູນຄ່າ		5	-
ລາຍຈ່າຍດອກເບ້ຍ	16	8,305	9,890
ຄ່າເຜື່ອນໄຫວຍຸຕິທຳ	4,15	266,090	-
ຂາດທຶນຄ່າດ້ອຍຄ່າ	6,15	1,299	-
ກຳໄລ/ (ຂາດທຶນ) ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**(5,903)**	**20,057**
ການປ່ຽນແປງໃນເງິນທຶນໝຸນວຽນ			
- ຫຼືກ້ອງຮັບການຄ້າ ແລະ ຫຼືກ້ອງຮັບອື່ນໆ		5,011	(142,729)
- ເຄື່ອງໃນສາງ		(300)	191
- ຊັບສິນໝຸນວຽນອື່ນໆ		(2,702)	3,222
- ຊັບສິນບໍ່ໝຸນວຽນອື່ນໆ		957	(89)
- ໜີ້ກ້ອງສົ່ງການຄ້າ ແລະ ໜີ້ກ້ອງສົ່ງອື່ນໆ		5,307	26,597
- ໜີ້ສິນໝຸນວຽນອື່ນໆ		6,095	5,107
ກະແສເງິນສົດທີ່ໄດ້ຈາກການດຳເນີນງານ		8,466	(87,644)
ອາກອນກຳໄລທີ່ຕ້ອງຈ່າຍ		(193)	(150)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		**8,273**	**(87,794)**
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:			
ຊື້ຊັບສິນຄົງຖາວອນ	6	(33)	(40)
ຊື້ຊັບສິນຄົງຖາວອນບໍ່ມີຕົວຕົນ		(10)	-
ເງິນສົດສຸດທິ ຈາກກິດຈະກຳ ການລົງທຶນ		**(43)**	**(40)**
ກະແສເງິນສົດຈາກກິດຈະກຳການເງິນ:			
ລາຍຮັບຈາກເງິນກູ້ຢືມ	9	10,585	135,631
ການຊຳລະເງິນຕົ້ນຂອງເງິນກູ້ຢືມ	9	(8,800)	(134,831)
ໄດ້ຮັບເງິນຈາກການອອກຊຸ້ນສາມັນ	12	-	94,540
ຈ່າຍເງິນປັນຜົນ	14	(611)	-
ຈ່າຍດອກເບ້ຍ		(9,890)	(7,762)
ເງິນສົດຈາກກິດຈະກຳຫາງການເງິນ		**(8,715)**	**87,578**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການສະເທົ່າເງິນສົດ:		(486)	(256)
ເງິນສົດ ແລະ ລາຍການສະເທົ່າເງິນສົດໃນຕົ້ນປີ	3	540	803
ຜົນຂອງຜົນຕ່າງແລກປ່ຽນເງິນສົດ ແລະ ລາຍການສະເທົ່າເງິນສົດ		-	(7)
ເງິນສົດ ແລະ ລາຍການສະເທົ່າເງິນສົດໃນຕົ້ນປີ	3	**54**	**540**
ລາຍການບໍ່ແມ່ນເງິນສົດ			
ຊັບສິນຄົງທີ່ເພີ່ມຂຶ້ນຈາກການລະຫວ່າງ ໜີ້ກ້ອງຮັບຍັງບໍ່ທັນໄດ້ຮັບ	6	4,069	-
ເງິນປັນຜົນຄ້າງຈ່າຍໃຫ້ຜູ້ຖືຊຸ້ນລາຍໃຫຍ່	11	1,863	-
ຍອດເງິນກູ້ຢືມແລະລາຍຮັບທີ່ຕ້ອງ	9	2,578	-
ຫຼຸດຄືນຈົດທະບຽນ ທີ່ບໍ່ແມ່ນເງິນສົດ		-	200,000
ຍອດໜີ້ກ້ອງສົ່ງໄດ້ຮັບຈາກ		-	960

ທ່ານ ສິຂາ ພົມມະຈັກ
ຜູ້ອຳນວຍການໃຫຍ່
ວັນທີ: 22 ພະຈິກ 2019

ທ່ານ ອະໂນໄຊ ສິຫາລາດ
ຫົວໜ້າການເງິນ
ວັນທີ: 22 ພະຈິກ 2019

ຊີວະປະຫວັດຫຍໍ້

ທ່ານ ຂັນທະວົງ ດາລາວົງ
ບ້ານ ຕານມີໄຊ, ເມືອງໄຊທານີ, ນະຄອນຫຼວງ.
ໂທລະສັບມືຖື: (856-20) 55599153.
ວັນເດືອນປີເກີດ: ວັນທີ 10 ມີຖຸນາ 1961.
ສັນຊາດ: ລາວ.
ອີເມວ: khanthavong1958@gmail.com



ວຸດທິການສຶກສາ

- ປະລິນຍາໂທ ຄະນິດສາດ, ມະຫາວິທະຍາໄລໂອນໂກກຮາດ, ປະເທດຣັດເຊຍ.
- ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຂອນແກ່ນ.
- ປະລິນຍາຕີ ການກໍ່ສ້າງ ແລະ ການສ້າງພັກ, ມະຫາວິທະຍາໄລ ໂອນໂກກຮາດ,ປະເທດຣັດເຊຍ.
- ປະລິນຍາຕີ ຄະນິດສາດ, ມະຫາວິທະຍາໄລ ໂອນໂກກຮາດ, ປະເທດຣັດເຊຍ.
- ປະລິນຍາຕີ ດົນຕີ, ມະຫາວິທະຍາໄລ ດົນຕີ ໂມສໂກ, ປະເທດຣັດເຊຍ.
- ປະລິນຍາຕີ ຄຸ້ມຄອງອຸດສາຫະກຳ, ປະເທດຣັດເຊຍ.
- ປະລິນຍາຕີ ການຄອມພິວເຕີ (ມີເດຍ) ສ້າງພາບພະຍົນ, ມະຫາວິທະຍາໄລ RECSAM.
- ຊັ້ນສູງ ຄະນິດສາດໂຮງຮຽນ ສ້າງຄູ ເລກ 3.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ	ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ, ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
2015ເຖິງ ປັດຈຸບັນ	ທີ່ປຶກສາ (ມາດຕະຖານ ແລະ ການຄຸ້ມຄອງລະບົບ ISO)/ສູນຢັ້ງຢືນມາດຕະຖານ ແລະ ກວດກາຄຸນະພາບແຫ່ງຊາດ.
2006-2016	ເລຂາທິການ (ບໍລິຫານສະພາ)/ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.
2004-2006	ຊ່ຽວຊານງານຫຼັກສູດ ແລະ ຕຳລາຮຽນ (ບໍລິຫານໂຄງການ)/ໂຄງການ TTES ກະຊວງ ສຶກສາທິການ.
2000-2004	ຜູ້ອຳນວຍການ (ຜູ້ບໍລິຫານໂຮງງານທັງສອງແຫ່ງ)/ໂຮງງານເຫຼັກຊຽງຄວນ ແລະ ໂຮງງານ ສັງກະສີໂພນທັນ.
1999-2000	ຫົວໜ້າພະແນກບໍລິຫານທຸລະກິດ (ອາຈານສອນ ວິຊາ ທຸລະກິດ)/ມະຫາວິທະຍາໄລແຫ່ງ ຊາດ.
1990-1999	ຫົວໜ້າໜ່ວຍງານວິທະຍາສາດທຳມະຊາດ (ຊ່ຽວຊານດ້ານຫຼັກສູດ)/ສູນພັດທະນາຄູ.
1990-1993	ຫົວໜ້າພະແນກຄະນິດສາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູ ດົງໂດກ.
1981-1983	ຫົວໜ້າພະແນກທຳມະຊາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູເລກ 3.
1976-1978	ຫົວໜ້າຊີ້ນຳປະຊາສຶກສາເຂດຊົນເຜົ່າມົ້ງ (ອາຈານສອນ ຄະນິດສາດ)/ສຶກສາສູນກາງວຽງ ໄຊ.

ຫຼັກສູດຝຶກອົບຮົມ

- ວິທີການສ້າງຫຼັກສູດ ແລະ ຕຳລາຮຽນ, ມະຫາວິທະຍາໄລ ສີນະຄຣິນ ວິໂຣດ.
- ວິທີການບໍລິຫານອຸດສາຫະກຳ ແລະ ຄວາມສ່ຽງ, ສະຖາບັນການສຶກສາ ໂກຣິມໂບ.
- ການຄຸ້ມຄອງຄຸນນະພາບ ແລະ ການກວດສອບ, ສະຖາບັນການສົ່ງເສີມອຸດສາຫະກຳ.
- ການຄຸ້ມຄອງລິຂະສິດທາງປັນຍາ, ສະຖາບັນຈັນຍາບັນເຈນີວາ.

ຊີວະປະຫວັດຫຍໍ້



ທ່ານ ນັນທະລັດ ທິລະກຸນ.
ບ້ານ ວຽງຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.
ໂທລະສັບມືຖື: (856-20) 56110372.
ວັນເດືອນປີເກີດ: ວັນທີ 05 ມັງກອນ 1970.
ສັນຊາດ: ລາວ.
ອີເມວ: thirakul@hotmail.com

ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ ສະມາຊິກອິດສະຫຼະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
2011 -2016 ຜູ້ອຳນວຍການ/ Consultant – Accounting Company.
2009 – 2011 ຜູ້ອຳນວຍການ/ Petroff Communication.
2001 – 2003 ຜູ້ຈັດການ/ Canada Life Insurance.

ເອກະສານຄັດຕິດ 5

ໃບມອບສິດ

ຂຽນທີ່.....

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ ເດືອນ ແລະ ປີເກີດ.....
ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນ ເລກທີ.....ເຮືອນເລກທີ.....
ຖະໜົນ.....ບ້ານ.....ເມືອງ.....
ແຂວງ.....ປະເທດ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ .....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (3.1) ທ່ານ/ທ່ານ ນາງ.....ອາຍຸ.....ປີ
ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນເລກທີ....., ເຮືອນເລກທີ.....ບ້ານ.....
ເມືອງ.....ແຂວງ....., ປະເທດ..... ຫຼື

☐ (3.2) ທ່ານ ຂັນທະວົງ ດາລາວົງ ອາຍຸ 59 ປີ, ບ້ານ ຕາມມີໄຊ ເມືອງ ໄຊທານີ .ແຂວງ ນະຄອນຫຼວງວຽງຈັນ, ປະເທດ ລາວ ຫຼື

☐ (3.3) ທ່ານ ນັນທະລັດ ທິລະກຸນ ອາຍຸ 50 ປີ, ບ້ານ ວຽງຄຳ .
ເມືອງ.....ສີໂຄດຕະບອງ..... ແຂວງ.....ນະຄອນຫຼວງວຽງຈັນ.....,ປະເທດ ລາວ .

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2018 ເວລາ 13:00 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 01: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ ເພື່ອຊາບ

(ບໍ່ມີການລົງຄະແນນສຽງ)

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018
ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 06: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູກວດສອບພາຍນອກປະຈຳປີ 2019

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;
(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຈຸດປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ;
(7) ທຸກການກະທຳທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມ ເວັ້ນແຕ່ກໍລະນີຜູ້ຮັບມອບສິດບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສິດນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ຜູ້ມອບສິດ **ຜູ້ຮັບມອບສິດ**

ລົງລາຍເຊັນ..... ລົງລາຍເຊັນ.....

(.....) (.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສິດ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ,ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ຂອງບໍລິສັດ ພູ ສີກໍ່ສ້າງ ແລະ ພັດທະນາມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານ ຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ.

<u>ບໍລິສັດຂໍສະຫງວນສິດໃນການອານຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້</u>

1. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີເຂົ້າຮ່ວມກອງປະຊຸມ

1.1 ກໍລະນີຜູ້ຖືຮຸ້ນເປັນບຸກຄົນ

1.1.1. ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ

1.1.2. ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສິດຕາມແບບຟອມທີ່ຄັດຕິດພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

(2) ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

(3) ເອກະສານທີ່ທາງລັດຖະການອອກໃຫ້ຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຄະນະອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະ ສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນນິຕິບຸກຄົນ (ຄະນະອຳນວຍການ) ທີ່ເປັນຄົນຕ່າງ ປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອານຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງ ບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ເຊິ່ງມີຂໍ້ມູນສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັ່ນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ)

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

- ໃບມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ) ໃບທະບຽນວິສາຫະກິດ, ກິດລະບຽນຂອງບໍລິ ສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນມີອຳນາດກະທຳການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ) ຕາມຂໍ້ 1.2.1(1) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື ຂໍ້ 1.2.2 ແລ້ວແຕ່ກໍລະນີ

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວ

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນບໍລິສັດໄດ້ດ້ວຍຕົນເອງສາມາດມອບໝາຍໃຫ້ຜູ້ຕ່າງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ໂດຍດຳເນີນການດັ່ງນີ້:

2.1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ □ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ;

2.2. ນຳສົ່ງໜັງສືມອບສິດຄືນເລຂາກອງປະຊຸມບໍລິສັດ ກ່ອນວັນທີ 28 ກຸມພາ 2020 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕ່າງໜ້າຫຼາຍຄົນເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນໂດຍບໍ່ສາມາດມອບໝາຍພຽງບາງສ່ວນ ນ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00 ໂມງ ເປັນຕົ້ນໄປໃນວັນທີ 28

ກຸມພາ 2020 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຕາມແຜນທີ່ທີ່ໄດ້ຄັດຕິດມາພ້ອມ

ໃນນີ້, ໃນແຕ່ລະວາລະກອງປະຊຸມກ່ອນເລີ່ມການລົງຄະແນນ, ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດແລ້ວ

4. ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

4.1. ການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນຕົນຖືຢູ່ ເທົ່ານັ້ນ

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳລັບທຸກໆ ວາລະປະຊຸມທີ່ຕ້ອງມີການລົງຄະ ແນນສຽງໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2. ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານຈະຖາມກອງປະຊຸມວ່າມີຜູ້ໃດບໍ່ເຫັນດີ ຫຼື ບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີ ກັບວາລະປະຊຸມດັ່ງກ່າວໃຫ້ການເຄື່ອງໝາຍເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມທັງລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນເພື່ອສົ່ງມອບໃຫ້ເຈົ້າໜ້າທີ່ຂອງບໍລິສັດນຳໄປກວດນັບ, ຍົກເວັ້ນສຳລັບຜູ້ຕາງໜ້າເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະ ຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມາລວມເປັນຄະແນນສຽງອີກ.

4.3. ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດຈະເປັນຜູ້ອະທິບາຍວິທີນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ

ເອກະສານຄັດຕິດ 7

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ **(LSX)**,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394